# ຂັ້ນຕອນການເລີ່ມຕົ້ນທຸລະກິດຢູ່ ສປປ ລາວ

## ກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ



### 1 ໃບທະບຽນວິສາຫະກິດ (ຊ້າສຸດ 10 ວັນ)

ຜູ້ລົງທຶນ ທີ່ມີຈຸດປະສົງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ ສາມາດຍື່ນຄຳຮ້ອງຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງ ຂະແໜງອຸດສາຫະກຳ ແລະ ການຄ້າ ຕາມການແບ່ງຂັ້ນພິຈາລະນາ ການແຈ້ງຂຶ້ນທະບຽນວິສາຫະກິດ ລະຫວ່າງ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ມີທີ່ຕັ້ງສຳນັກງານຂອງຕົນຕັ້ງຢູ່.

ຜູ້ລົງທຶນ ຈະໄດ້ຮັບໃບທະບຽນວິສາຫະກິດ ພ້ອມກັບ ເລກປະຈຳຕົວຜູ້ເສຍອາກອນ ຊ້າສຸດ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານຖືກຕ້ອງຄົບຖ້ວນເປັນຕົ້ນໄປ.

### 2 ຕາປະທັບ (ຊ້າສຸດ 5 ວັນ)

ຜູ້ລົງທຶນ ນຳເອົາໃບທະບຽນວິສາຫະກິດ ໄປຍື່ນຂໍຄວັດຕາປະທັບນຳຂະແໜງ ປ້ອງກັນ ຄວາມສະຫງົບ.

ຜູ້ລົງທຶນ ຈະໄດ້ຮັບ ຕາປະທັບ ພ້ອມກັບ ໃບອະນຸຍາດນຳໃຊ້ຕາປະທັບ ຊ້າສຸດ 5 ວັນລັດຖະການ.



### 3 ຂຶ້ນທະບຽນປະກັນສັງຄົມ (ພາຍໃນ 2 ວັນ)



ຜູ້ລົງທຶນ ຂໍຂຶ້ນທະບຽນປະກັນສັງຄົມ ນຳຂະແໜງແຮງງານ ແລະ ສະຫວັດດີການສັງຄົມ.

ຜູ້ລົງທຶນ ຈະໄດ້ຮັບໃບຢັ້ງຢືນການຂຶ້ນທະບຽນ ປະກັນສັງຄົມ ພາຍໃນ 2 ວັນລັດຖະການ.

**ພາຍຫຼັງສຳເລັດ ທັງ 3 ຂັ້ນຕອນນີ້ແລ້ວ, ວິສາຫະກິດຕ້ອງປະຕິບັດ ຕາມແຕ່ລະກໍລະນີ:**



ໃນກິດຈະການ ທີ່ບໍ່ຈຳເປັນຂໍອະນຸຍາດ ດຳເນີນທຸລະກິດ, ຜູ້ລົງທຶນ ສາມາດດຳເນີນທຸລະກິດ ໄດ້ເລີຍ ຕາມທີ່ກຳນົດໄວ້ ໃນດ້ານຫຼັງໃບທະບຽນ ວິສາຫະກິດ.



ໃນກິດຈະການ ທີ່ຕ້ອງຂໍອະນຸຍາດ ດຳເນີນ ທຸລະກິດ, ຜູ້ລົງທຶນ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ກິດຈະການ ໃນບັນຊີຄວບຄຸມ ແລະ ກິດຈະການ ການລົງທຶນສຳປະທານ

ກິດຈະການ ໃນບັນຊີຄວບຄຸມ ແລະ ກິດຈະການ ການລົງທຶນສຳປະທານ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍ ການສົ່ງເສີມ ການລົງທຶນ ໂດຍຍື່ນຄຳຮ້ອງນຳຂະແໜງ ແຜນການ ແລະ ການລົງທຶນ.

ເບິ່ງຂໍ້ມູນເພີ່ມເຕີມໄດ້ທີ່: www.investlaos.gov.la

ສະໜັບສະໜູນໂດຍ:
Supported by:
Trade and Development · Australian Aid · Irish Aid Rialtas na hÉireann Government of Ireland · USAID FROM THE AMERICAN PEOPLE · THE WORLD BANK IBRD • IDA | WORLD BANK GROUP

ເບິ່ງຂໍ້ມູນເພີ່ມເຕີມໄດ້ທີ່: www.ned.moic.gov.la